# ຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ

# Effect of *Stylosanthes guianensis* CIAT 184 in Concentrate Ration on Native Goat Production Performance and Feed Cost

*ພອນມະນີ ທຳມະຈັກ[1] ອ່າງຄຳ ບຸດດາລາ[2] ແລະ ທະນູໄຊ ພົງອຸດົມ[3]*

***Phonmany Thammachuck, Angkham Boudala and Thanouxay Phongoudome***

## Abstract

The experiment was conducted at km 13 Agricultural Integrated Research Center, Faculty of Agriculture and Forestry, champasack University. During January 2016 to May 2016 on the title: Comparisonof different fermented food (banana trunk, Mor ning glory, Cabbage and Mixed) On Growth performance of Eisenia foetida. the propose of this study to find fermented food for Growth of Eisenia foetida. By using Randomized Complete Blok Design (RCBD) type contains 4 treatments of each 3 replications as details: $T_1$ = goat feed concentrations of 80%, 20% glossary; $T_2$ = goat feed concentrations of 60%, 40% glossary; T3 = goat feed concentrations of 40%, 60% glossary; $T_4$ = goat feed concentrations of 20%, 80% glossary. Napier grass using a basic food. That the efficiency of the food 4 beta is relatively low, the growth of native goats. The present experiment the growth is the best current test $T_3$ which is weighing more than 3 kg, followed by the pilot T4 which is weighing more than 3 kg, and yield less than the current trials 1 and 2, an average of 2 kg according to calculate the statistics that there are differences.

**Keybword:** *Stylosanthes guianensis* CIAT 184, native goat, napier (*Peninsetum purpureum*)

## ບົດຄັດຫຍໍ້

ການຄົ້ນຄວ້າທົດລອງໃນຄັ້ງນີ້ແມ່ນໄດ້ປະຕິບັດຢູ່ສູນທົດລອງກະສິກຳແບບປະສົມປະສານ ຫຼັກ 13 ຄະ ນະກະເສດສາດ ແລະ ປ່າໄມ້ ມະຫາວິທະຍາໄລ ຈຳປາສັກ, ໃນລະຫວ່າງເດືອນ 12/2015 ຫາ ເດືອນ 5/2016 ໃນຫົວຂໍ້: ຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການ

[1] ພາກວິຊາ: ລ້ຽງສັດ ຄະນະກະເສດສາດ ແລະ ປ່າໄມ້ ມະຫາວິທະຍາໄລ ຈຳປາສັກ
Department of Liverstock, Faculty of Agriculture and Forestry Chapasack University
Tel. 020 99978385, E-mail Address: Thammachakp@yahoo.com

[2]ພາກວິຊາ: ລ້ຽງສັດ ຄະນະກະເສດສາດ ແລະ ປ່າໄມ້ ມະຫາວິທະຍາໄລ ຈຳປາສັກ
Department of Liverstock, Faculty of Agriculture and Forestry Chapasack University

[3]ພາກວິຊາ: ລ້ຽງສັດ ຄະນະກະເສດສາດ ແລະ ປ່າໄມ້ ມະຫາວິທະຍາໄລ ຈຳປາສັກ
Department of Liverstock, Faculty of Agriculture and Forestry Chapasack University

ຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ. ຈຸດປະສົງຂອງການສຶກສາຄັ້ງນີ້ ແມ່ນເພື່ອກຳນົດອັດຕາການນຳໃຊ້ຖົ່ວ Stylo CIAT184 ທີ່ເໝາະສົມຕໍ່ກັບປະສິດທິພາບການຈະເລີນເຕີບໂຕ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ ການທົດລອງໃນຄັ້ງນີ້ແມ່ນໄດ້ນຳໃຊ້ຮູບແບບການທົດລອງແບບ RCBD (Randomized Complete Block Design) ປະກອບມີ 4 ຈຸທົດລອງ ແລະ 3 ຊໍ້າຄື: $T_1$ = ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 80%, ຖົ່ວສະໄຕໂລ 20%; $T_2$ = ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 60%, ຖົ່ວສະໄຕໂລ 40%; $T_3$ = ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 40%, ຖົ່ວສະໄຕໂລ 60%; $T_4$ = ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 20%, ຖົ່ວສະໄຕໂລ 80%. ໂດຍນຳໃຊ້ຫຍ້າເນເປຍເປັນອາຫານພື້ນຖານ.

ເຫັນໄດ້ວ່າປະສິດທິພາບຂອງອາຫານທັງ 4 ຈຸທົດລອງ ແມ່ນຂ້ອນຂ້າງຕ່ຳ ຕໍ່ການຈະເລີນເຕີບໂຕຂອງແບ້ພັນພື້ນເມືອງ. ເຊິ່ງຈຸທົດລອງທີ່ໃຫ້ການຈະເລີນເຕີບໂຕດີທີ່ສຸດແມ່ນ ຈຸທົດລອງ $T_3$ ເຊິ່ງໃຫ້ນ້ຳໜັກເພີ່ມ ເທົ່າກັບ 3 kg, ຮອງລົງມາແມ່ນ ຈຸທົດລອງ $T_4$ ເຊິ່ງໃຫ້ນ້ຳໜັກເພີ່ມ ເທົ່າກັບ 3 kg, ແລະ ແລະ ໃຫ້ຜົນຜະລິດໜ້ອຍກວ່າໝູ່ແມ່ນຈຸທົດລອງທີ 1 ແລະ ທີ 2, ສະເລ່ຍແມ່ນ 2 kg ອີງຕາມການຄິດໄລ່ທາງດ້ານສະຖິຕິແລ້ວເຫັນວ່າບໍ່ມີຄວາມແຕກຕ່າງ.

**ຄຳສຳຄັນ**: ຖົ່ວສະໄຕໂລ, ຫຍ້າເນເປຍ, ແບ້ພື້ນເມືອງ.

## ພາກສະເໜີ

ບັນຫາດ້ານອາຫານສັດທີ່ກະທົບຕໍ່ຊາວກະສິກອນຜູ້ລ້ຽງແບ້ສ່ວນໃຫຍ່ ຄືພື້ນທີ່ທົ່ງຫຍ້າຖືກຈຳກັດລົງດ້ວຍເຫດຜົນຕ່າງໆເປັນຕົ້ນແມ່ນການຂະຫຍາຍໂຕຂອງຊຸມຊົນ ແລະ ການປູກພືດເສດຖະກິດຕ່າງໆທີ່ໃຫ້ຜົນຕອບແທນ ຫຼາຍກ່ວາການລ້ຽງແບ້, ພ້ອມດຽວກັນນັ້ນການລ້ຽງແບ້ຂອງຊາວກະສິກອນສ່ວນໃຫຍ່ມັກມີບັນຫາຄືເຂົ້າໄປທຳລາຍ ເຄື່ອງປູກຂອງຝັງ. ສະນັ້ນການລ້ຽງແບ້ໃນຮູບແບບປະປ່ອຍໃຫ້ຫາກິນຕາມທຳມະຊາດແມ່ນນັບມື້ທີ່ຈະລຸດລົງ, ຈົນສິ່ງຜົນເຮັດໃຫ້ຊາວກະສິກອນທີ່ມີເນື້ອທີ່ໜ້ອຍ, ຂາດແຮງງານປ່ຽນອາຊີບແລະປ່ຽນພື້ນທີ່ໄປເຮັດກິດຈະກຳອື່ນທີ່ບໍ່ ແມ່ນການລ້ຽງແບ້, ເຮັດໃຫ້ຈຳນວນແບ້ລຸດລົງສິ່ງຜົນເຮັດໃຫ້ລາຄາຊີ້ນແບ້ແພງ ແລະ ຫາໄດ້ຍາກ, ຈາກການລາຍງານ ສະຖິຕິສັດລ້ຽງຂອງຂະແໜງລ້ຽງສັດ - ການປະມົງແຂວງຈຳປາສັກ (2012) ທົ່ວແຂວງມີຈຳນວນແບ້ທັງໝົດ 4,675 ໂຕ, ໃນນັ້ນມີຟາມລ້ຽງແບ້ທີ່ຈົດທະບຽນ 12 ຟາມ, ມີແບ້ທັງໝົດ 3,592 ໂຕ, ລາຄາຊີ້ນແບ້ຕາມທ້ອງຕະ ຫຼາດ 30,000-45,000 ກີບ/ກິໂລກຼາມ. ແບ້ເປັນສັດຄ້ຽວເອື້ອງຂະໜາດນ້ອຍສ່ວນໃຫຍ່ມີສີນ້ຳຕານນອກຈາກນີ້ຍັງມີສີນ້ຳຕານປົນດຳ ຫຼື ມີທັງສີດຳ, ນ້ຳຕານ ແລະ ສີ ຂາວປົນກັນ, ມີເຂົາທັງໂຕຜູ້ ແລະ ໂຕແມ່, ໃບຫູນ້ອຍຕັ້ງ, ນ້ຳໜັກເກີດໃໝ່ປະມານ 1.5 kg, ເມື່ອໃຫຍ່ເຕັມທີ່ຈະມີຄວາມສູງປະມານ 50 cm, ມີນ້ຳໜັກປະມານ 20-25 kg, ຜະລິດໄດ້ທັງຊີ້ນ ແລະ ນ້ຳນົມທີ່ຕ່ຳ.

ຖົ່ວສະໄຕໂລ (Stylo CIAT 184) ເປັນພືດອາຫານສັດທີ່ມີການຈະເລີນເຕີບໂຕດີໃນພື້ນທີ່ເຂດຮ້ອນ, ສາມາດປັບໂຕໄດ້ດີໃນພື້ນທີ່ດິນຊາຍ ແລະ ສະພາບດິນເປັນອາຊິດ (ຈຸລີຣັດ ແລະ ຄະນະ, 2005), ມີຊົງພຸ່ມຕັ້ງ ແລະ ຊົງພຸ່ມໃຫຍ່ກ່ວາຖົ່ວຮາມາຕາ, ມີຄວາມໜ້າກິນສູງໃນຊ່ວງທີ່ໃກ້ອອກ ດອກ (ກອບແກ້ວ, 2001), ຜົນຜະລິດນ້ຳໜັກແຫ້ງ 1,5-2,5 ໂຕນ/ໄລ່/ປີ, ໃນດ້ານຄຸນຄ່າທາງສານອາຫານເມື່ອອາຍຸຕັດ 60 ວັນ, ມີວັດຖຸແຫ້ງ 26,89% ໂປຣຕີນ ລວມ 15,58%, ADF 36,28% ແລະ NDF 51,58% (ສຸກໄຊ, 2005), ຊຶ່ງໃນການເພີ້ມການຈະເລີນເຕີບໂຕ ແລະ ຄຸນຄ່າທາງດ້ານພືດອາຫານສັດ, ເພື່ອເພີ້ມຜົນຜະລິດສັດຕໍ່ໂຕ ແລະ ເພີ້ມຈຳນວນສັດຕໍ່ພື້ນທີ່ປູກພືດອາຫານສັດວິທີປະຕິບັດອີກວິທີໜຶ່ງຄື

ການໃສ່ຝຸ່ນ. ອີງຕາມຄຸນລັກສະນະພິເສດທາງດ້ານຜົນຜະລິດ ແລະ ອົງປະກອບທາງດ້ານເຄມີຖ້ານຳເອົາຖົ່ວຊະນິດນີ້ມາປະສົມທົດແທນອາຫານເຂັ້ມຂຸ້ນກໍ່ອາດຈະເຮັດໃຫ້ສາມາດລຸດການໃຊ້ອາຫານເຂັ້ມຂຸ້ນລົງໄດ້. ດັ່ງນັ້ນການສຶກສາເຖິງຜົນຂອງການນຳໃຊ້ຖົ່ວສະໄຕໂລ 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາສ່ວນຕ່າງ ໆຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງເພື່ອພັດທະນາການລ້ຽງ, ເພີ້ມ ປະລິມານຊີ້ນ, ລຸດຕົ້ນທຶນການຜະລິດ ແລະ ສົ່ງເສີມຊາວກະສິກອນຜູ້ທີ່ສົນໃຈລ້ຽງແບ້.

## ຈຸດປະສົງ

1. ເພື່ອກຳນົດອັດຕາການນຳໃຊ້ຖົ່ວ Stylo CIAT 184 ທີ່ເໝາະສົມຕໍ່ກັບປະສິດທິພາບການຈະເລີນເຕີບໂຕ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ.

## ອຸປະກອນ ແລະ ວິທີການ

### ສະຖານທີ່ ແລະ ໄລຍະເວລາ

ການທົດລອງຄັ້ງນີ້ແມ່ນຈະໄດ້ປະຕິບັດຢູ່ທີ່ສູນກະສິກຳແບບປະສົມປະສານຫຼັກ13ຂອງຄະນະກະເສດ ສາດ ແລະ ປ່າໄມ້ ມະຫາວິທະຍາໄລ ຈຳປາສັກ, ເຊິ່ງເປັນສູນທີ່ໃຊ້ທົດລອງ ແລະ ສາທິດພາກປະຕິບັດໃຫ້ແກ່ນັກສຶກ ສາພ້ອມທັງພາກສ່ວນທີ່ກ່ຽວຂ້ອງ, ສະຖານທີ່ແມ່ນຫ່າງຈາກໂຕເມືອງປາກເຊປະມານ 13 km, (ໄປທາງປາກເຊ-ເວີນຄາມ), ໂດຍໃຊ້ໄລຍະເວລາທົດລອງລ້ຽງທັງໝົດ 7 ເດືອນ, ແບ່ງອອກເປັນ 2 ໄລຍະຄື: ການປູກຖົ່ວສະໄຕໂລຕະຫຼອດເຖິງການນຳມາປະສົມອາຫານເປັນເວລາ 3 ເດືອນ, ແຕ່ເດືອນ 12/2015 - 03/2016 ນຳແບ້ເຂົ້າມາລ້ຽງຕະຫຼອດສິ້ນສຸດການທົດລອງ, ເປັນເວລາ3 ເດືອນ, ແຕ່ເດືອນ 03/2016 - 05/ 2016.

### ວິທີການທົດລອງ

ໃຊ້ແບ້ພັນພື້ນເມືອງເພດຜູ້, ທີ່ມີອາຍຸຫຼັງຢ່ານົມ, ບໍ່ຕອນ, ອາຍຸປະມານ 4 ເດືອນ, ນ້ຳໜັກສະເລ່ຍ 7-10 ກິໂລກຼາມ/ໂຕ, ຈຳນວນ 12 ໂຕ, ວາງແຜນການທົດລອງແບບສຸ່ມສົມບູນພາຍໃນບ໋ອກ RCBD (Randomized Complete Block Design), ມີ 4 ສິ່ງທົດລອງ (Treatment), 3 ຊ້ຳ (Replication), ໃຫ້ແບ້ທົດລອງໃນແຕ່ລະ ສິ່ງທົດລອງໄດ້ຮັບຖົ່ວສະໄຕໂລ 184 ຮ່ວມກັບອານຫານເຂັ້ມຂຸ້ນ ໃນອັດຕາສ່ວນດັ່ງຕໍ່ໄປນີ້:

- $C_{80}S_{20}$ ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 80%, ຖົ່ວສະໄຕໂລ 20%
- $C_{60}S_{40}$ ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 60%, ຖົ່ວສະໄຕໂລ 40%
- $C_{40}S_{60}$ ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 40%, ຖົ່ວສະໄຕໂລ 60%
- $C_{20}S_{80}$ ໃຫ້ແບ້ໄດ້ຮັບອາຫານເຂັ້ມຂຸ້ນ 20%, ຖົ່ວສະໄຕໂລ 80%
- (ໝາຍເຫດ: C – Concentrate ແລະ S – Stylo




ຮູບທີ 1 : ການວາງແຜນການທົດລອງ

ຄອກ ແລະ ອາຫານທົດລອງ

ລ້ຽງແບ້ໃນໂຮງເຮືອນຂະໜາດ 3 x 8 m, ຍົກພື້ນສູງປະມານ 1 m, ພາຍໃນໂຮງເຮືອນແບ່ງເປັນຄອກຄັງດຽວຂະໜາດ 1 x 1m, ຈຳນວນ 12 ຄອກດຽວ, ຄອກມຸງດ້ວຍຫຍ້າ, ແອ້ມດ້ວຍໄມ້ດົ້ວ, ອ້ອມຂ້າງອີກຊັ້ນໜຶ່ງດ້ວຍຜ້າກັນແສງ, ເພື່ອປ້ອງກັນແສງແດງ ແລະ ຝົນຕົກສາດໃສ່, ພາຍໃນຄອກຈະມີອຸປະກອນໃຫ້ນ້ຳ ແລະ ໃຫ້ອາຫານຄົບຊຸດ, ຫຼັງຈາກສ້າງຄອກສຳເລັດແລ້ວແມ່ນອານາໄມຄອກ ແລະ ຂ້າເຊື້ອດ້ວຍປູນຂາວ.

ອາຫານປະສົມທີ່ໃຊ້ໃນການທົດລອງແມ່ນປະສົມຕາມສູດທີ່ກຳນົດປະກອບດ້ວຍ:ມັນ ຕົ້ນບົດ, ຮຳ,ກາກຖົ່ວເຫຼືອງ, ປາປົ່ນ, ເປືອກຫອຍປົ່ນ, ເກືອ, ໄດແຄຣຊຽມຟອສເຟດ ແລະ ພຣີມິກ, ໂດຍມີໂປຣຕີນລວມ (%CP) 12.95% ແລະ ມີສານອາຫານທີ່ຍ່ອຍໄດ້ທັງໝົດ (TDN) 71.87% (ສູດອາຫານດັ່ງຕາຕະລາງລຸ່ມນີ້). ການປະສົມອາຫານເຂັ້ມຂຸ້ນຈະປະສົມໃຫ້ໄດ້ປະລິມານໃນຈຳນວນພຽງພໍສຳລັບລ້ຽງແບ້ພາຍໃນ15ວັນເພື່ອໃຫ້ແບ້ໄດ້ຮັບຄຸນນະພາບດີ ແລະ ໃໝ່ສົດຢູ່ສະເໝີ.

ຕາຕະລາງ 1: ສ່ວນປະກອບຂອງອາຫານ

| ສ່ວນປະສົມ | ອັດຕາສ່ວນ |
|---|---|
| ຮຳອ່ອນ | 35 |
| ມັນຕົ້ນບົດ | 40 |
| ກາກຖົ່ວເຫຼືອງ (44%) | 15 |
| ກາກນ້ຳຕານ | 8 |
| ແຮ່ທາດ | 1 |
| ເກືອ | 1 |
| ລວມ | 100 |
| ໂປຣຕີນ (%) | 12-13% |

ດຳເນີນການປູກຖົ່ວ ແລະ ມີການຕັດຄັ້ງທຳອິດຫຼັງປູກທຳອິດເມື່ອອາຍຸ 90 ວັນ ແລະ ຕັດຄັ້ງຕໍ່ໄປເມື່ອຫຍ້າ ອາຍຸ 60 ວັນ, ຈາກນັ້ນນຳມາຕັດໃຫ້ມີຄວາມຍາວ 1-2 cm, ນຳມາຕາກແດດໃຫ້ແຫ້ງເຫຼືອຄວາມຊຸ່ມປະມານ 12-15% ນຳໄປບົດໃຫ້ມຸ່ນ, ຈາກນັ້ນຈຶ່ງນຳໄປປະສົມອາຫານເຂັ້ມຂຸ້ນທີ່ກຽມໄວ້.

ຈາກນັ້ນນຳເອົາອາຫານເຂັ້ມຂຸ້ນທີ່ກຽມໄວ້ມາປະສົມກັບຖົ່ວສະໄຕໂລບົດຕາມອັດຕາສ່ວນທີ່ກຳນົດໃນແຕ່ ລະສິ່ງທົດລອງ, ໂດຍປະສົມໃຫ້ເຂົ້າກັນດີກ່ອນນຳໄປໃຫ້ແບ້ກິນ. ແບ່ງອາຫານໃຫ້ກິນວັນລະ 3 ຄັ້ງຄື: ຕອນເຊົ້າເວ ລາ 7:30; ຕອນສວຍ 12:30 ແລະ ຕອນແລງ 17:30 ໂມງ. ການໃຫ້ອາຫານແຕ່ລະຄັ້ງໃຫ້ໃນປະລິມານ 0.5 - 1 kg/ໂຕ/ຄັ້ງ ແລະ ໃຫ້ຫຍ້າເນເປຍ Napier (*Peninsetum purpureum*) ເສີມໃນອັດຕາເທົ່າກັນ 1 - 2 kg/ໂຕ/ວັນ.

## ການເກັບກຳຂໍ້ມູນ

ບັນທຶກນ້ຳໜັກແບ້ໂດຍການຊັ່ງທຸກໆ 14 ວັນ ແລະ ນ້ຳໜັກສຸດທ້າຍ, ບັນທຶກປະລິມານອາຫານທີ່ແບ້ກິນໄດ້ ໃນແຕ່ລະວັນ, ຊັ່ງນ້ຳໜັກອາຫານທີ່ໃຫ້ ແລະ ອາຫານທີ່ເຫຼືອ, ຄິດໄລ່ອັດຕາການແລກປ່ຽນອາຫານເປັນນ້ຳໜັກໂຕ ແລະ ຄິດໄລ່ຕົ້ນທຶນຄ່າອາຫານ.

## *ການວິເຄາະຂໍ້ມູນ*

ສົມທຽບແບບລະບົບLSD(LeastSignificantDifference).ວິເຄາະຂໍ້ມູ ດ້ວຍ ໂປຼແກຼມ Statistix 8.0 ເຮັດກາ ວິເຄາະຫາ ຄວາມແປປວ ແບບ Analysis of Variation (ANOVA) (ພັດຊະຊີນີ, 2007).

## ຜົນໄດ້ຮັບ ແລະ ວິຈານ

ຜົນຈາກການທົດລອງຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ ເຫັນວ່າ ແຕ່ລະຈຸທົດລອງມີລັກສະນະການຈະເລີນເຕີບໂຕທີ່ຂ້ອນຂ້າງດີຄື: ຈຸທົດລອງທີ່ເສີມຖົ່ວ 20% ໃນສູດອາຫານ ສາມາດສ້າງນ້ຳໜັກເພີ່ມໄດ້ 2 kg/ໂຕ, ຈຸທົດລອງທີ່ເສີມຖົ່ວ 40% ໃນສູດອາຫານ ສາມາດສ້າງນ້ຳໜັກເພີ່ມໄດ້ 2 kg/ໂຕ, ຈຸທົດລອງທີ່ເສີມຖົ່ວ 60% ໃນສູດອາຫານ ສາມາດສ້າງນ້ຳໜັກເພີ່ມໄດ້ 3.66 kg/ໂຕ ແລະ ຈຸທົດລອງທີ່ເສີມຖົ່ວ 80% ໃນສູດອາຫານ ສາມາດສ້າງນ້ຳໜັກເພີ່ມໄດ້ 2 kg/ໂຕ, ແລະ ຈາກການວິເຄາະຂໍ້ມູນຜົນໄດ້ຮັບຕ່າງໆ ຂອງການທົດລອງ ສະແດງໃຫ້ເຫັນດັ່ງຕໍ່ໄປນີ້:

ຕາຕະລາງທີ 2 : ຜົນຂອງການເພີ່ມຂຶ້ນທາງດ້ານນ້ຳໜັກຂອງແບ້

| ຂໍ້ມູນທີ່ເກັບກຳ | T1 | T2 | T3 | T4 | %CV | SEM | F-test |
|---|---|---|---|---|---|---|---|
| ຈຳນວນແບ້ທົດລອງ (ໂຕ) | 3 | 3 | 3 | 3 | - | - | - |
| ຈຳນວນວັນທີ່ລ້ຽງ (ວັນ) | 84 | 84 | 84 | 84 | - | - | - |
| ນ້ຳໜັກຂອງແບ້ (kg/ໂຕ) | | | | | - | - | - |

| | | | | | | | |
|---|---|---|---|---|---|---|---|
| - ນ້ຳໜັກເລີ່ມຕົ້ນ | 8 | 8.3 | 8. 6 | 7.66 | - | - | - |
| - ນ້ຳໜັກສຸດທ້າຍ | 10 | 10.3 | 12.3 | 9.66 | 32.69 | ± 1.99 | 0.36 NS |
| - ນ້ຳໜັກເພີ່ມ | 2 | 2 | 3.66 | 2 | 100.65 | ± 1.40 | 0.35 NS |
| ປະລິມານອາຫານທີ່ໃຊ້ຂຸ້ນ (kg/ໂຕ) | 37.6 | 37 | 42.6 | 36.2 | 27.67 | ± 6.13 | 0.23 NS |
| ອັດຕາການຈະເລີນເຕີບໂຕ g/ໂຕ/ວັນ | 24 | 24 | 43 | 24 | 100.05 | ± 16.5 | 0.35 NS |
| ອັດຕາການແລກປ່ຽນອາຫານເປັນຊີ້ນ | 21.0 | 21.6 | 16.6 | 21.0 | 51.6 | ±5.28 | 0.6 NS |

ໝາຍເຫດ: NS= not significantly (ບໍ່ມີຄວາມແຕກຕ່າງທາງດ້ານສະຖິຕິ)

ຜົນຈາກການທົດລອງຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ ໂດຍການນຳໃຊ້ຫຍ້າເນເປຍເປັນອາຫານພື້ນຖານ. ຈາກການເກັບກຳຂໍ້ມູນ ແລະ ວິເຄາະຂໍ້ມູນຈາກຜົນໄດ້ຮັບຂອງການທົດລອງສະແດງໃຫ້ເຫັນດັ່ງໃນຕາຕະລາງ ເຊິ່ງເຫັນໄດ້ວ່າຜົນການນຳໃຊ້ຖົ່ວສະໄຕໂລແຫ້ງບົດຮ່ວມກັບອາຫານເຂັ້ມຂຸ້ນ ໃນການລ້ຽງແບ້ພື້ນເມືອງນັ້ນແມ່ນບໍ່ມີຜົນຕໍ່ການຈະເລີນເຕີບໂຕ ເຫັນໄດ້ຈາກການລ້ຽງໃນໄລຍະ 3 ເດືອນເຫັນວ່າມີອັດຕາການຈະເລີນເຕີບໂຕທີ່ຂ້ອນຂ້າງຕ່ຳ ແລະ ອັດຕາການແລກປ່ຽນອາຫານເປັນຊີ້ນກໍ່ຂ້ອນຂ້າງໜ້ອຍ. ເຊິ່ງເມື່ອທຽບກັບການທົດລອງຂອງພິສຸດ ແລະຄະນະ(2004)ໄດ້ທົດລອງໃຊ້ຖົ່ວສະໄຕໂລສົດປະສົມກັບຫຍ້າຊີກນານ(Brachiariahumi dicola) ທີ່ມີໂປຣຕີນໜ້ອຍກວ່າ 7% ປະສົມກັນໃນອັດຕາສ່ວນ 1:1 ຕໍ່ນ້ຳໜັກໂຕເຮັດໃຫ້ອາຫານມີລະດັບໂປຣຕີນເພີ້ມຂຶ້ນສູງກວ່າ 10%, ເມື່ອນຳໄປລ້ຽງແບ້ພື້ນເມືອງເພດຜູ້ເຮັດໃຫ້ມີອັດຕາການຈະເລີນເຕີບໂຕສູງກວ່າການລ້ຽງແບ້ໂດຍໃຊ້ຫຍ້າຊີກນານຢ່າງດຽວ. ສອດຄ່ອງກັບ ສັກດາ ແລະ ຄະນະ (2004) ໂດຍການທົດລອງໃຊ້ຖົ່ວສະໄຕໂລ(Stylo) ແຫ້ງຮ່ວມກັບຫຍ້າຊີກນານລ້ຽງງົວພັນອາເມລິກັນບຣາມັນເພດຜູ້,ເຮັດໃຫ້ຄຸນນະພາບອາ ຫານຫຍາບ ແລະອັດຕາການຈະເລີນເຕີບໂຕຂອງງົວດີຂຶ້ນ,ເຊິ່ງມີອັດຕາສ່ວນຂອງຖົ່ວສະໄຕໂລບໍ່ຕ່ຳກວ່າ50%, ຈະເຮັດໃຫ້ອາຫານຫຍາບມີໂປຣຕີນສູງຂຶ້ນກວ່າເກົ່າເປັນ 10.23%.

ຍ້ຽມ ແລະ ຄະນະ (2008) ໄດ້ເຮັດການທົດລອງ, ໂດຍນຳໃຊ້ຖົ່ວສະໄຕໂລປະສົມກັບຫຍ້າຊີກນານແຫ້ງໃນອັດຕາ 1:1 ຫຼື 50%, ໂດຍໃຫ້ກິນຢ່າງເຕັມທີ່, ພ້ອມດຽວກັນກໍ່ເສີມດ້ວຍອາຫານເຂັ້ມຂຸ້ນທີ່ມີໂປຣຕີນ 15%, ໃຫ້ ກິນໃນອັດຕາ 2%/ນ້ຳໜັກໂຕ, ຈະເຮັດໃຫ້ແບ້ມີການຈະເລີນເຕີບໂຕດີຂຶ້ນສະເລ່ຍ 93.88 g/ໂຕ/ວັນ, ມີປະສິດທິພາບ ການແລກປ່ຽນອາຫານສະເລ່ຍ 6.78

ເສກສັນ ແລະ ຄະນະ (2011) ໄດ້ເຮັດການທົດລອງນຳໃຊ້ຖົ່ວສະໄຕໂລ Stylosanthes guianensis CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາສ່ວນແຕກຕ່າງກັນຄື: 1) ໃຫ້ອາຫານເຂັ້ມຂຸ້ນ ແລະ ຖົ່ວສະໄຕໂລໃນອັດຕາ 80:20, 2) ໃຫ້ອາຫານເຂັ້ມຂຸ້ນ ແລະ ຖົ່ວສະໄຕໂລໃນອັດຕາ 60:40, 3) ໃຫ້ອາຫານເຂັ້ມຂຸ້ມ ແລະ ຖົ່ວສະໄຕໂລໃນ ອັດຕາ 40:60,4) ໃຫ້ອາຫານເຂັ້ມຂຸ້ນ ແລະ ຖົ່ວສະໄຕໂລໃນອັດຕາ 20:80. ໃຊ້ໄລຍະເວລາລ້ຽງ 120 ວັນ, ໂດຍ ນຳເອົາຖົ່ວສະໄຕໂລແຫ້ງບົດປະສົມໃນອາຫານເຂັ້ມຂຸ້ນໃຫ້ກິນຕາມນ້ຳໜັກໂຕ,ເຊິ່ງບໍ່ໄດ້ມີການເສີມອາຫານຫຍາບ (ຫຍ້າ), ທົດລອງກັບແບ້ພື້ນເມືອງ. ຜົນທີ່ໄດ້ຮັບປະກົດວ່າ: ອັດຕາການຈະເລີນເຕີບໂຕທີ່ແຕກຕ່າງກັນ (P<0.05) ໂດຍການໃຫ້ອາຫານເຂັ້ມຂຸ້ນ : ຖົ່ວສະໄຕໂລໃນອັດຕາ 80:20 ສູງກວ່າໝູ່ສະເລ່ຍ 101.34 g/ໂຕ/ວັນ, ນ້ຳໜັກເພີ້ມ 12.34 kg/ໂຕ.

ໃນການທົດລອງ ຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ. ເຊິ່ງເລີ່ມປະຕິບັດແຕ່ວັນທີ 22/02/2016-22/05/2016 ເຊິ່ງໃຊ້ໄລຍະເວລາທັງໝົດ 3 ເດືອນ ເຊິ່ງໃຊ້ອາຫານທັງໝົດຈຳນວນ 460.56 ກິໂລ

ເຊິ່ງໃຊ້ ຈຸທົດລອງ T1= 112.98 kg ຫລື 37.66 kg/ໂຕ, T2= 111 kg ຫລື 37 kg/ໂຕ, T3= 127.98 kg ຫລື 42.66 kg/ໂຕ ແລະ T4= 108.6 kg ຫລື 36.2 kg/ໂຕ ເຊິ່ງຕົ້ນທຶນຄ່າອາຫານເຂັ້ມຂຸ້ນໂດຍສະເລ່ຍແມ່ນ 3.600 ກີບ/kg ແລະ ຖົ່ວສະໄຕໂລແຫ້ງແມ່ນໄລ່ສະເລ່ຍແມ່ນ ກິໂລລະ 10,000 ກີບ ເຊິ່ງສະແດງຕົ້ນທຶນຄ່າ ຈາກຜົນໄດ້ຮັບການຈະເລີນເຕີບໂຕທາງດ້ານນ້ຳໜັກ ເຫັນວ່າບໍ່ມີຄວາມເໝາະສົມກັບລາຄາອາຫານທີ່ນຳໃຊ້ ເພາະວ່າລາຄາຂ້ອນຂ້າງສູງ ແຕ່ໃຫ້ຜົນການຜະລິດຕ່ຳ.

ຕາຕະລາງທີ 3: ຕົ້ນທຶນຄ່າອາຫານທີ່ໃຊ້ໃນການທົດລອງ

| ຈຸທົດລອງ | ອາຫານທີ່ໃຊ້ທັງໝົດ (kg) | ອາຫານເຂັ້ມຂຸ້ນ (kg) | ຖົ່ວສະໄຕໂລ (kg) | ລາ ອາຫານ (ກີບ/kg) | ລາຄາຖົ່ວ (ກີບ/kg) | ຄ່າອາຫານເຂັ້ມຂຸ້ນ | ຄ່າຖົ່ວສະໄຕໂລ | ລວມມູນຄ່າ (ກີບ) |
|---|---|---|---|---|---|---|---|---|
| T1 | 112.98 | 90.384 | 22.596 | 3,600 | 10,000 | 325,382 | 225,960 | 551,342 |
| T2 | 111 | 66.6 | 44.4 | 3,600 | 10,000 | 239,760 | 444,000 | 683,760 |
| T3 | 127.98 | 51.192 | 76.788 | 3,600 | 10,000 | 184,291 | 767,880 | 952,171 |
| T4 | 108.6 | 21.72 | 86.88 | 3,600 | 10,000 | 78,192 | 868,800 | 946,992 |
| | | ລວມທັງໝົດ | | | | 827,625 | 2,306,640 | 3,134,265 |

**ສະຫຼຸບ**

ຜ່ານການທົດລອງ: ຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດແລະຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ ເຫັນວ່າ: ການນຳໃຊ້ຖົ່ວສະໄຕໂລໃນສູດອາຫານທັງ 4 ຈຸທົດລອງ ແມ່ນບໍ່ມີຜົນຕໍ່ການຈະເລີນເຕີບໂຕຂອງແບ້ພື້ນເມືອງ ແລະ ບໍ່ໃຫ້ຜົນໄດ້ຮັບທາງດ້ານເສດຖະກິດ.

**ຂໍ້ແນະນຳ**

ໃນການຜົນຂອງການໃຊ້ຖົ່ວສະໄຕໂລ CIAT 184 ຮ່ວມກັບອາຫານເຂັ້ມຂຸ້ນໃນອັດຕາທີ່ແຕກຕ່າງກັນຕໍ່ສະມັດຕະພາບການຜະລິດ ແລະ ຕົ້ນທຶນຄ່າອາຫານຂອງແບ້ພື້ນເມືອງ. ໂດຍມີຈຸດ ປະສົງເພື່ອການຈະເລີນເຕີບໂຕ ແລະ ຫຼຸດຕົ້ນທຶນຄ່າອາຫານໃນການລ້ຽງ ເພື່ອຢາກເຮັດໃຫ້ຜົນຂອງການຄົ້ນຄ້ວາທົດລອງມີຄວາມຊັດເຈນແນ່ນອນຍິ່ງຂຶ້ນໃນການທົດລອງຄັ້ງຕໍ່ໄປຂ້າພະເຈົ້າໃນນາມຜູ້ປະຕິບັດຕົວຈິງຂໍແນະນຳບາງບັນຫາດັ່ງນີ້: ໃນການລ້ຽງສັດກະພະລວມຄວນຮັບປະກັນທາງດ້ານທົ່ງຫຍ້າ ແລະ ວັດຖຸດິບອາຫານຕ່າງໆທີ່ຈະນຳໃຊ້ໃນການປຸງແຕ່ງເປັນອາຫານເຂັ້ມຂຸ້ນນັ້ນຄວນເລືອກເອົາຊະນິດທີ່ສາມາດຊອກຫາໄດ້ງ່າຍ, ມີໃນທ້ອງ ຖິ່ນ ເພື່ອຄວາມສະດວກ ແລະ ປະຢັດຕົ້ນທຶນ.

## ເອກະສານອ້າງອີງ


ເສກສັນ  ສວນກູນ, ມິນທິຊາ ພຸດຊາຄຳ ແລະ  ສີລີ ລັກ ວົງພິເສນ. (2011). ຜົນຂອງການໃຊ້ ຖົ່ວສະໄຕໂລຮ່ວມກັບອາຫານເຂັ້ມຂຸ້ນ  ໃນອັດຕາສ່ວນຕ່າງໆ  ຕໍ່ສະມັດຕະພາການຜະລິດໃນການລ້ຽງແບ້ພັພື້ນເມືອງ.  ລາຍງານກອງປະຊຸມວິຊາການ ແລະ ນຳສະເໜີຜົນງານວິໄຈຂອງ ມສທ ວິໄຈ ປະຈຳ ປີ 2011.

ຂະແໜງວິຊາການຈັດການ ການກະເສດ ແລະ ສະຫະກອນມະຫາວິທະຍາໄລສຸໂຂໄທທຳມາທິລາດ. ໜ 257 (ພາສາໄທ)

ສັກດາ ປະຈັນບຸນເຈດຖາ, ຈຸຣີລັດ ເງິນແດງ ແລະ ພິລົມ ບົວແກ້ວ. (2004). ຫຍ້າຊິກນານຊະນິດເລືອ ແລະ ຖົ່ວສະໄຕໂລເປັນອາຫານ  ຫຍາບລ້ຽງງົວພັນຊີ້ນ.  ການປະຊຸມວິຊາການສັດຕະວະສາດຄັ້ງທີ  2  ເລື່ອງກ້າວທັນສະໃໝກັບປະສຸສັດໄທ. ພາກວິຊາສັດຕະວະສາດ ຄະນະກະເສດສາດ ມະຫາວິທະຍາໄລຂອນແກ່ນ. ໜ 155 (ພາສາໄທ)

ຍ້ຽມ  ຄົງສະຫວັດ, ສັກດາ ປະຈັນບຸນເຈດຖາແລະ ຈັກກະພົງ ຂານໂບ. (2008). ຜົນຂອງການເສີມອາຫານເຂັ້ມຂຸ້ນຕໍ່ກັບສະມັດຖະພາບການຈະເລີນເຕີບໂຕຂອງແບ້ລູກປະສົມແອງໂກນູບຽມໃນສະພາບການລ້ຽງແບບຂັງຄອກ. ລາຍງານຜົນການວິໄຈກອງອາຫານສັດປະຈຳປີ  2008.  ກົມປະສຸສັດ  ກະຊວງກະເສດ  ແລະ  ສະຫະກອນ.  ໜ 258 (ພາສາໄທ)

ພິສຸດ ສຸກກະເສມ, ສະຖິດ ມັງມີໄຊ ແລະ ພິລົມບົວແກ້ວ. (2004). ການໃຊ້ຖົ່ວທ່າພະສະໄຕໂລລ້ຽງແບ້ພັນຊີ້ນ. ລາຍງານການວິໄຈກອງອາຫານສັດປະຈຳປີ 2004. ກົມປະສຸສັດ ກະຊວງກະເສດ ແລະ ສະຫະກອນ. 230 (ພາສາໄທ).